# ໂຄງການຊ່ວຍເຫຼືອດ້ານການເງິນ ສັງລວມຫຍໍ້ເປັນພາສາທີ່ເຂົ້າໃຈງ່າຍ

ແນະນຳ: ສູນໃຫ້ບໍລິການສຸຂະພາບ Davis ຂອງ UC (UC Davis Health) ພະຍາຍາມໃຫ້ການດູແລຄົນເຈັບດ້ວຍຄຸນນະພາບສຳລັບຊຸມຊົນທີ່ພວກເຮົາບໍລິການ. ນະໂຍບາຍນີ້ ສະແດງໃຫ້ເຫັນຄວາມຮັບຜິດຊອບຂອງ UC Davis Health ຕໍ່ພາລະໜ້າທີ່ ແລະ ວິໄສທັດຂອງພວກເຮົາ ໂດຍການຊ່ວຍໃຫ້ຄົນເຈັບທີ່ມີລາຍໄດ້ຕໍ່າ, ບໍ່ມີປະກັນໄພ ແລະ ມີປະກັນໄພຂັ້ນຕໍ່າສາມາດໄດ້ຮັບການດູແລສຸຂະພາບທີ່ເໝາະສົມໃນຊຸມຊົນຂອງພວກເຮົາ.

**ໂຄງການຊ່ວຍເຫຼືອດ້ານການເງິນ UCDH (UCDH Financial Assistance Program) (ມູນນິທິດູແລສຸຂະພາບ - Charity Care)**

ໂຄງການຊ່ວຍເຫຼືອດ້ານການເງິນ (Financial Assistance Program), ເອີ້ນອີກຢ່າງໜຶ່ງວ່າ (ມູນນິທິດູແລສຸຂະພາບ - Charity Care), ໄດ້ຖືກອອກແບບມາເພື່ອຊ່ວຍໃຫ້ຄົນເຈັບທີ່ມີລາຍໄດ້ຕໍ່າ, ບໍ່ມີປະກັນໄພ ແລະມີປະກັນໄພຂັ້ນຕໍ່າສາມາດໄດ້ຮັບການດູແລສຸຂະພາບທີ່ເໝາະສົມໃນຊຸມຊົນຂອງພວກເຮົາ.

**ການບໍລິການທີ່ສົມຄວນຈະໄດ້ຮັບ -**
ໂຄງການຊ່ວຍເຫຼືອດ້ານການເງິນ ໃຊ້ໃນກໍລະນີສຸກເສີນ ຫຼື ການບໍລິການດູແລສຸຂະພາບທີ່ຈຳເປັນສຳລັບການດູແລສຸຂະພາບຕ່າງໆທີ່ສູນບໍລິການສຸຂະພາບ Davis ຂອງ UC (UC Davis Health) ຈັດຫາ ແລະ ອອກໃບບິນໃຫ້. ເປັນການບໍລິການທີ່ຜູ້ຈັດຫາອື່ນ/ຜູ້ທີ່ບໍ່ແມ່ນ UC Davis Health ອອກໃບບິນໃຫ້ແຍກຕ່າງຫາກ. ຜູ້ຈັດຫາຈະບໍ່ມີສິດໄດ້ຮັບການພິຈາລະນາຊ່ວຍເຫຼືອຈາກໂຄງການຊ່ວຍເຫຼືອດ້ານການເງິນ.

**ການພິຈາລະນາສິດໃນການໄດ້ຮັບ** – ສິດໃນການໄດ້ຮັບໄດ້ຖືກຕັດສິນບົນພື້ນຖານຂອງການທົບທວນແບບຟອມກວດກາເບື້ອງຕົ້ນດ້ານການເງິນ (Financial Screening Form) ແລະ ເອກະສານເພີ່ມເຕີມ, ລວມທັງຫຼັກຖານຢັ້ງຢືນລາຍໄດ້, ຊັບສິນ ແລະ ໜີ້ສິນ, ໂດຍທົ່ວໄປແລ້ວ ຄົນເຈັບທີ່ມີລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕໍ່າກວ່າ 200% ຂອງລະດັບຄວາມທຸກຍາກຂອງຣັຖບານກາງ (Federal Poverty Level) ຈະໄດ້ຮັບສິດສ່ວນຫລຸດ 100%. ຄົນເຈັບທີ່ມີລາຍໄດ້ຂອງຄອບຄົວຢູ່ລະຫວ່າງ 201% ຫາ 350% ຂອງ ຂອງລະດັບຄວາມທຸກຍາກຂອງຣັຖບານກາງ (Federal Poverty Level) ອາດຈະມີສິດໄດ້ຮັບສ່ວນຫລຸດບາງສ່ວນ ອີງຕາມລະດັບລາຍໄດ້. ຖ້າທ່ານໄດ້ຮັບການຊ່ວຍເຫຼືອດ້ານການເງິນພາຍໃຕ້ນະໂຍບາຍຂອງພວກເຮົາ, ທ່ານຈະບໍ່ຖືກເກັບເພີ່ມຄ່າບໍລິການເຫດການສຸກເສີນ ຫຼືການດູແລທີ່ຈຳເປັນດ້ານສຸຂະພາບອື່ນໆທີ່ແພງກວ່າຈຳນວນເງິນທີ່ຢູ່ໃນໃບບິນ (AGB) ສຳລັບຄົນເຈັບທີ່ກຳລັງໄດ້ຮັບການຄຸ້ມຄອງຂອງເມດີແຄ (Medicare).

**ຈະເອົາສຳເນົາກ່ຽວກັບນະໂຍບາຍ ແລະ ການສະໝັກຂໍໂຄງການຊ່ວຍເຫຼືອດ້ານການເງິນໄດ້ແນວໃດ**

ທ່ານສາມາດຮັບເອົາສຳເນົາກ່ຽວກັບນະໂຍບາຍ ແລະ ການສະໝັກຂໍໂຄງການຊ່ວຍເຫຼືອດ້ານການເງິນຂອງພວກເຮົາໄດ້ທີ່:

- ເວັບໄຊທ໌ຂອງ UC Davis Health ທີ່ http://www.ucdmc.ucdavis.edu/medicalcenter/patients/financial-assistance.html
- ຢູ່ໃນພະແນກສຸກເສີນ (Emergency Department), ພະແນກສະສາງການເງິນ (Financial Clearance Office) (ເບິ່ງທີ່ຢູ່ດ້ານລຸ່ມນີ້), ສູນດູແລສຸຂະພາບ Dav ຂອງ UC (UC Davis Health) ໃດໜຶ່ງ ຊຶ່ງເປັນບ່ອນທີ່ຄົນເຈັບລົງທະບຽນ ແລະ ຢູ່ໃນຫ້ອງການບໍລິການອອກໃບບິນຄົນເຈັບສຳລັບລູ ຄ້າ (Patient Billing Customer Service Office) ຂອງພວກເຮົາ (ເບິ່ງທີ່ຢູ່ດ້ານລຸ່ມນີ້).
- ຕ້ອງການເອກະສານທາງໄປສະນີ ຈົ່ງຕິດຕໍ່ຫາຫ້ອງການບໍລິການລູກຄ້າ (Customer Service Department) ທີ່ໝາຍເລກ 916-734-9200 ຫຼື 1-800-551-9411 (ວັນຈັນຫາວັນສຸກ., 8:30 ເຊົ້າ ຫາ 4:00 ແລງ).

**ພາສາ/ແປພາສາ**
ນະໂຍບາຍສຳລັບໂຄງການຊ່ວຍເຫຼືອດ້ານການເງິນ, ໃບສະໝັກຂອງໂຄງການ (ເອີ້ນວ່າ: "ແບບຟອມຂໍ້ມູນດ້ານການເງິນຂອງຄົນເຈັບ"), ແລະ ສັງລວມຫຍໍ້ໂຄງການເປັນພາສາທີ່ເຂົ້າໃຈງ່າຍ ມີພາສາອັງກິດ, ສະເປນ, ມົ້ງ, ຈີນ, ລາວ, ຫວຽດ ແລະ ຣັຖເຊຍ ມີໄວ້ໃຫ້ຕາມຕ້ອງການ.

**ວິທີສະໝັກຂໍໂຄງການຊ່ວຍເຫຼືອດ້ານການເງິນຂອງພວກເຮົາ**

ຕື່ມຂໍ້ມູນໃສ່ໃບສະໝັກຂໍການຊ່ວຍເຫຼືອດ້ານການເງິນພ້ອມດ້ວຍເອກະສານເພີ່ມເຕີມອື່ນໆ ສາມາດເຂົ້າມາເອົາໄດ້ ຫຼື ສົ່ງທາງໄປສະນີ.

ເຂົ້າມາເອົາ: ວັນຈັນ - ວັນສຸກ 8:30 ໂມງເຊົ້າ ຫາ 4 ໂມງແລງ

ພະແນກສະສາງດ້ານການເງິນ (Financial Clearance Department)
2315 Stockton Blvd, Suite 1P214
Sacramento, CA  95817

Patient Billing Customer Service
4900 Broadway, Suite 2600
Sacramento, CA  95820

ສົ່ງທາງໄປສະນີໄປທີ່:

UC Davis Health Patient Billing
Attn: FA Program
PO Box 168015
Sacramento, CA  95816-9979